ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------------

ກະຊວງ ກະສິກຳ ແລະ ປ່າໄມ້

ຫ້ອງການກະຊວງ

ເລກທີ 1452/ຫກ.ປຝ.03

ວັນທີ 23 SEP 2003

## ແຈ້ງການ

ເຖິງ: ທ່ານ ຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ໃນຂອບເຂດທົ່ວປະເທດ.

ເລື້ອງ: ການສົ່ງ ຜະລິດຕະພັນພືດ ອອກໄປຕ່າງປະເທດ.

- ອີງຕາມ ການຊີ້ນຳຂອງ ທ່ານລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ໃນວັນທີ 12/9/2003.
- ອີງຕາມ ດຳລັດ ວ່າດ້ວຍ ການກັກກັນພືດ ຢູ່ ສປປ ລາວ ເລກທີ 66/ນຍ, ລົງວັນທີ 21/3/1993 ແລະ ກົດລະບຽບ ກັກກັນພືດ ເລກທີ 0693/ກປ, ລົງວັນທີ 02/7/1993.
- ອີງຕາມ ບົດລາຍງານ ຂອງກົມປູກຝັງ ກ່ຽວກັບ ຈົດໝາຍແຈ້ງການ ຂອງກົມອາຫານ ແລະ ການກະເສດ ລັດກາລີຟໍເນັຍ ສະຫະລັດ ອາເມລິກາ ກ່ຽວກັບ ການນຳເຂົ້າ ຜະລິດຕະພັນ ກະສິກຳ ຈາກ ສປປ ລາວ ເລກທີ 0728/ປຝ.2003, ລົງວັນທີ 9/9/2003.

ຕາມຈິດໃຈຂ້າງເທິງດັ່ງກ່າວນີ້ ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ທົບທວນຄືນ ເນື້ອໃນດຳລັດ ແລະ ລະບຽບກັກກັນພືດ ໃນ ສປປ ລາວ ຊຶ່ງເຫັນວ່າ ມີຄວາມສອດຄ່ອງ ຕໍ່ສົນທິສັນຍາຂອງສາກົນ ວ່າດ້ວຍ ການປ້ອງກັນພືດ International Plant Protection Convention (IPPC) ແລະ ແທດເໝາະ ກັບເງື່ອນໄຂ ຂອງ ສປປ ລາວ.

ໃນໄລຍະທີ່ຜ່ານມາ ກົມອາຫານ ແລະ ການກະເສດ, ລັດກາລີຟໍເນັຍ ສະຫະລັດ ອາເມລິກາ ໄດ້ສົ່ງຈົດໝາຍແຈ້ງການ ມາຫາກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ພາຍຫຼັງ ທີ່ພາກສ່ວນກ່ຽວຂ້ອງ ໄດ້ກວດພົບ ວັດສະດຸພັນ ທີ່ສົ່ງຈາກໄປສະນີລາວ ຈາກເຈົ້າຂອງຊື່ວ່າ ກົວຈາງແຊ່ເຈີ KOY CHANG SAE THER ເຖິງຜູ້ຊື່ວ່າ ຈາວມຶກໂຈແຊ CHAO MEUG CHOW SAE ທີ່ຢູ່ 66E. SWEET, VISALIA, CA 93292. ຫີບຫໍ່ໄປສະນີດັ່ງກ່າວ ໄດ້ຝາກລົງທະບຽນ

(ເລກທີ 440) ຈາກ ສປປ ລາວ ໄປຮອດ ລັດກາລີຟໍເນັຽ ເມື່ອວັນທີ 14 ສິງຫາ 2003. ເຈົ້າໜ້າທີ່ປ້ອງກັນພືດ ຂອງສະຫະລັດ ອາເມລິກາ ໄດ້ກວດພົບ ໝາກກໍ່ ແລະ ສິ່ງອື່ນໆ ແຕ່ບໍ່ມີໃບຢັ້ງຢືນ ປອດສັດຕູພືດ ຂອງ ສປປ ລາວ (ເພາະພວກກ່ຽວຖືເບົາ) ດັ່ງນັ້ນ ຈຶ່ງຖືເປັນ ການລະເມີດກົດໝາຍ ແລະ ລະບຽບການ ກັກກັນພືດ ຂອງລັດກາລີຟໍເນັຽ. ທາງການກ່ຽວຂ້ອງ ໄດ້ອະທິບາຍວ່າ: ວັດສະດຸພັນ ຖືກປະຕິເສດ ການນຳເຂົ້າ ຍ້ອນວ່າ ສັດຕູພືດ ທີ່ຍັງບໍ່ທັນເຄີຍມີ ຢູ່ໃນລັດກາລີຟໍເນັຽນັ້ນ ອາດຈະສ້າງຄວາມເສັຽຫາຍແກ່ພືດ ແລະ ອື່ນໆ ຢ່າງຫຼວງຫຼາຍ.

ດັ່ງນັ້ນ ເພື່ອບໍ່ຢາກໃຫ້ບັນຫາດັ່ງກ່າວມານີ້ ເກີດຂຶ້ນອີກ ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງມາຍັງທ່ານ ເພື່ອຊີ້ນຳ ແລະ ແຈ້ງໃຫ້ບຸກຄົນ ຫຼື ພາກສ່ວນຕ່າງໆ ທີ່ມີຈຸດປະສົງ ສົ່ງຜະລິດຕະພັນພືດ ອອກໄປຕ່າງປະເທດນັ້ນ ຄວນປຶກສາຫາລື ນຳ ຂະແໜງການປູກຝັງ ຢູ່ໃນທ້ອງຖິ່ນຂອງຕົນ ເພື່ອອອກໃບຢັ້ງຢືນ ປອດສັດຕູພືດໃຫ້ ຕາມລະບຽບການ ກັກກັນພືດສາກົນ ບໍ່ດັ່ງນັ້ນ ປະເທດປາຍທາງ ອາດຈະປັບໃໝ.(ຕົວຢ່າງທີ່ບທໍ່ ມີໃນເອກະສານ ຄັດຕິດມາພ້ອມນີ້).

ຫົວໜ້າ ຫ້ອງການ ກະຊວງ ກະສິກຳ ແລະ ປ່າໄມ້

ທອງພາ ວົງສີບໍ່ສິນ

ບ່ອນນຳສົ່ງ

- ກົມກວດກາ, ກະຊວງກະສິກຳ
  ແລະ ປ່າໄມ້ 1 ສະບັບ.
- ກົມປູກຝັງ 1 ສະບັບ.
- ຫ້ອງການ ກະຊວງ ຄົມມະນາຄົມ, ຂົນສົ່ງ
  ໄປສະນີ ແລະ ກໍ່ສ້າງ 1 ສະບັບ.
- ເກັບມ້ຽນ 1 ສະບັບ.

*(ຮຽບຮຽງ ໂດຍ : ກົມປູກຝັງ ສ.ປ.ປ. ລາວ, ຕາມ ເອກະສານ ຕົ້ນສະບັບ ພາສາອັງກິດ, ເດືອນກັນຍາ 2003)*

## ຫ້າມສົ່ງ ທໍ່ ສັດຕູພືດ.

## ຄໍາເຕືອນ ຂອງ ກົມ ອາຫານ ແລະ ການກະເສດ ລັດການີຟໍເນັຽ.

ແມງໄມ້ ສັດຕູພືດ ແລະ ພະຍາດພືດ ຈາກພາຍນອກ ສາມາດທໍາລາຍ ການກະເສດ ແລະ ສິ່ງແວດລ້ອມ ຂອງລັດການີຟໍເນັຽ ຊຶ່ງແຕ່ລະປີ ຄິດເປັນມູນຄ່າ ຫລາຍລ້ານ ໂດລາ. ກ່ອງຫີບຫໍ່ ຫມາກໄມ້, ຜັກ ແລະ ຜະລິດຕະພັນພືດ ອື່ນ ໆ ທີ່ມີແມງໄມ້ ແລະ ພະຍາດ ໄດ້ຖືກ ກວດພົບ ໂດຍ ຄະນະ ນັກຊີວະວິທະຍາ ຂອງລັດ ແລະ ເມືອງ.

ລາຍການກວດກາ ກ່ອງຫີບຫໍ່ ຊຶ່ງມີຄວາມສ່ຽງສູງ ໄດ້ກວດພົບ ໃນກ່ອງ ທີ່ບໍ່ໄດ້ຂຽນຫມາຍ ການຫຸ້ມຫໍ່ ທີ່ບັນຈຸຜະລິດຕະພັນພືດ.

**ກົດຫມາຍ ລັດການີຟໍເນັຽ ແຈ້ງບອກວ່າ ທຸກ ໆ ການຈັດສົ່ງຜະລິດຕະພັນພືດ ຫລື ຫມາກໄມ້ ຖືເຂົ້າ ຫລື ສົ່ງເຂົ້າ ໄປຍັງພາຍໃນ ລັດ ຕ້ອງລະບຸ ຂໍ້ມູນ ດັ່ງຕໍ່ໄປນີ້ :**




ໃຫ້ສອບຖາມ ຂະແຫນງການ ປູກຝັງ ທີ່ຢູ່ໃກ້ທ່ານ ວ່າ ມີຫຍັງແດ່ ອະນຸຍາດ ໃຫ້ນໍາເຂົ້າ ໄປຍັງ ລັດການີຟໍເນັຽ.

ຫລື ຖາມໄປຍັງ ຜູ້ກວດການ ກະສິກໍາ ເມືອງ ຕຸລາເຣ, ໂທລະສັບ (559)685-3323 ; ໂທລະສານ (559)685-3350.Tulare County Agricultural Commissioner, California State

**ໂທດ ໃນການສົ່ງ ຫມາກໄມ້, ຜັກ ຫລື ຜະລິດຕະພັນພືດ ທີ່ຕ້ອງຫ້າມ ຫລື ຜິດກົດຫມາຍ ອາດຖືກ ປັບໃຫມ ສູງກວ່າ 25.000 $ (ຊາວຫ້າພັນ ໂດລາສະຫະລັດ)**